ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ເລກທີ: 0.8.3.9../ສ.ວ.ນ
ນະຄອນຫຼວງວຽງຈັນ,ວັນທີ 07 ພະຈິກ 2025

ມະຕິ
ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ຄັ້ງທີ 04 ປະຈຳປີ 2025, ວັນທີ 07 ພະຈິກ 2025

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 04/2025 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 07 ພະຈິກ 2025 ທີ່ສຳນັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍເປັນປະທານຂອງ **ທ່ານ ທສ.ປອ ໄຊພອນ ກອງມະນີລາ** ຮອງສະພາບໍລິຫານ, ສະມາຊິກອິດສະຫຼະ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ພ້ອມດ້ວຍສະມາຊິກສະພາບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງທີ 03/2025.
2. **ມະຕິ:** ເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳໄຕມາດ **3** ປີ 2025 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳໄຕມາດ **3** ປີ 2025.
3. **ມະຕິ:** ເຫັນດີນຳແຜນຈັດກອງປະຊຸມສະພາບໍລິຫານຂອງບໍລິສັດປະຈຳປີ 2026.
4. **ມະຕິ:** ເຫັນດີໃຫ້ບໍລິສັດຊື້ທີ່ດິນເພື່ອນຳໃຊ້ໃນການປັບປຸງສາຂາສີໄຄ ໂດຍມີເນື້ອທີ່ດິນ 14,260 ຕາແມັດ ລວມເປັນເງິນທັງໝົດ 6,000,000 ໂດລາສະຫາລັດອາເມລິກາ (USD) ແລະ ເຫັນດີອະນຸມັດໃຫ້ ທ່ານ ອັດ ດານາ ສຸຄະບັນດິດ ເປັນຜູ້ມີອຳນາດລົງນາມໃນເອກະສານ ທີ່ກ່ຽວຂ້ອງໃນນາມ ຂອງບໍລິສັດ ລວມທັງມີສິດ ແລະ ອຳນາດໃນການແຕ່ງຕັ້ງຜູ້ອື່ນ ເພື່ອດຳເນີນວຽກງານດັ່ງກ່າວແທນ ພ້ອມທັງເຮັດບົດສຶກສາໂຄງການຄວາມ ເປັນໄປໄດ້ ລາຍງານຕໍ່ກອງປະຊຸມຮັບຊາບ.

ກອງປະຊຸມໄດ້ປິດລົງເວລາ 15:30 ໂມງ ຂອງວັນດຽວກັນ.

ຮອງສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ທ່ານ ທສ.ປອ ໄຊພອນ ກອງມະນີລາ